ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
======0000======

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ: 101/ສອສ

ນະຄອນຫລວງວຽງຈັນ,ວັນທີ: 31 ສິງຫາ 2020

# ແຈ້ງການ

ເຖິງ: ບັນດາສະມາຊິກ ສອສ ທົ່ວປະເທດ

ເລື່ອງ : ການປັບປຸງວິທີການ ຕິດຕາມເງິນກູ້ຂອງສະມາຊິກ

- ອີງຕາມ ບົດບັນທຶກກວດກາ ສະຫະກອນ ອອມຊັບ-ສິນເຊື່ອ ອທອ ປະຈໍາປີ 2019 ຂອງກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປລາວ;
- ອີງຕາມ ບົດບັນທຶກກອງປະຊຸມຄັ້ງວັນທີ 24 ກໍລະກົດ 2020 ຂອງຄະນະອໍານວຍການ ສອສ;
- ອີງຕາມ ບົດລາຍງານສະບັບເລກທີ 088/ໜສ.ສອສ, ລົງວັນທີ 30/7/2020 ກ່ຽວກັບການປັບປຸງວິທີການຕິດຕາມໜີ້ເງິນກູ້;
- ອີງຕາມມະຕິກອງປະຊຸມສະບັບເລກທີ100/ສອສ,ລົງວັນທີ 31 ສິງຫາ 2020 ຂອງຄະນະສະພາບໍລິຫານ ສອສ.

ຜູ້ອໍານວຍການ ສະຫະກອນ ອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງ ບັນດາສະມາຊິກ ສອສ ໃນຂອບເຂດທົ່ວປະເທດ ຊາບວ່າ ສອສ ຈະໄດ້ປັບປຸງການຕິດຕາມເງິນກູ້ຢືມຂອງສະມາຊິກ ເພື່ອເຮັດໃຫ້ ການຕິດຕາມເງິນກູ້ຂອງສະມາຊິກຖືກຕ້ອງກັບຄວາມເປັນຈິງ ແລະ ສອດຄ່ອງຕາມວັນໃນປະຕິທິນ. ສະນັ້ນຈຶ່ງຂໍແຈ້ງໃຫ້ບັນດາສະມາຊິກ ສອສ ໃນຂອບເຂດທົ່ວປະເທດ ດັ່ງລຸ່ມນີ້:

1. ສໍາລັບສະມາຊິກທີ່ກູ້ຢືມເງິນກ່ອນເດືອນ 7/2020 (ເດືອນ ກໍລະກົດ ຄືນຫລັງ) ສອສ ຈະປັບປຸງຍອດເຫລືອເງິນກູ້ຂອງສະມາຊິກ ໂດຍຈະໄດ້ຍົກຍອດເຫລືອຂອງເງິນກູ້ຕາມຈໍານວນເດືອນທີ່ຍັງເຫລືອແລ້ວຕັ້ງສັນຍາໃໝ່ໃນເດືອນ 8/2020;
2. ສໍາລັບສະມາຊິກທີ່ກູ້ຢືມໃໝ່ໃນເດືອນ 8/2020 ເປັນຕົ້ນໄປ ສອສ ຈະໄດ້ຕັດເງິນເດືອນຂອງສະມາຊິກທີ່ກູ້ໃນລະຫວ່າງວັນທີ 1 ຫາ ວັນທີ 20 ໂດຍມີຕົ້ນທຶນພ້ອມດ້ວຍດອກເບ້ຍໝົດເດືອນ. ຕົວຢ່າງ: ທ. ກ ກູ້ຢືມເງິນໃນວັນທີ 10 ເດືອນ 8/2020 ມູນຄ່າ 10,000,000ກີບ ຕົ້ນທຶນຊໍາລະຕໍ່ເດືອນ 1,000,000ກີບ, ໃນວັນທີ 20/8/20 ສອສ ສົ່ງຂໍ້ມູນໄປຕັດເງິນເດືອນຜູ້ກ່ຽວໃນເດືອນ 8/2020 ມີຕົ້ນທຶນ 1,000,000 ກີບ ດອກເບ້ຍ ຈໍານວນ 22 ວັນ 10,000,000 ຄູນ 1,56% ຫານ 30 ຄູນ 22 = 114,400 ກີບ.
3. ສໍາລັບ ສະມາຊິກທີ່ກູ້ຢືມໃນລະຫວ່າງວັນທີ 20 ຫາ 31 ສອສ ຈະໄດ້ຄິດໄລ່ດອກເບ້ຍຕາມຈໍານວນວັນທີ່ກູ້ດັ່ງກ່າວ ແລະ ສະມາຊິກຕ້ອງຊໍາລະດອກເບ້ຍດັ່ງກ່າວເປັນເງິນສົດ ສ່ວນຕົ້ນທຶນປະຈໍາເດືອນ ແມ່ນຈະສົ່ງຕັດເງິນເດືອນ ພ້ອມດ້ວຍດອກເບ້ຍຂອງເດືອນຖັດໄປ. ຕົວຢ່າງ: ທ ກ ກູ້ຢືມເງິນໃນວັນທີ 22 ເດືອນ 8/2020 ມູນຄ່າ 10,000,000ກີບ ຕົ້ນທຶນຊໍາລະຕໍ່ເດືອນ

**1,000,000 ກີບ, ໃນມື້ທີຜູ້ກູ່ຽວຮັບເງິນຜູ້ກູ່ຽວຕ້ອງໄດ້ຊໍາລະດອກເບັ້ຍຂອງເດືອນ 8/2020 ດອກເບັ້ຍ ຈໍານວນ 11 ວັນ 10,000,000 ຄູນ 1,56% ຫານ 30 ຄູນ 11 = 57,200 ກີບ.**

4. ເຫັນດີໃຫ້ຕັດໜີ້ໃນລະບົບໃໝ່ຂອງສະມາຊິກໃນທຸກໆທ້າຍເດືອນ ເພື່ອໃຫ້ຮອບວຽນການຕັດໜີ້ຖືກຕ້ອງຕາມວັນທີໃນປະຕິທິນ;

5. ການຕິດຕາມເງິນກູ້ຂອງສະມາຊິກລະບົບໃໝ່ເລີ່ມນໍາໃຊ້ລະບົບແຕ່ເດືອນ ສິງຫາ 2020 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາ ສະມາຊິກ ສອສ ໃນຂອບເຂດທົ່ວປະເທດ ເພື່ອຊາບ.

**ຜູ້ອໍານວຍການ ສອສ**

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ-ສິນເຊື່ອ

ວັດທະນາ ວົງເຫວັນ

<u>ບ່ອນສົ່ງ</u>:

1.ຄະນະສະພາບໍລິຫານ ທ່ານລະ 1 ສະບັບ ເພື່ອຊາບ;

2.ສະມາຊິກ ສອສ ທັງໝົດ ເພື່ອຊາບ;

3.ໜ່ວຍງານບໍລິຫານ-ໄອທີ 1 ສະບັບ ເພື່ອເກັບສໍາເນົາ.